ຮັນສ໌ ເກອອກ ເບີເກີ
ຄຳວອນ ບຸນຍະພອນ

# ຊັບສິນບັດຂອງໂຄງການປົກປັກຮັກສາຮູບພາບພຣະພຸດທະສາສະໜາ

ຫຼວງພະບາງ/ປະເທດລາວ

## ຮູບພາບປະຫວັດສາດທີ່ຖ່າຍ ຫຼື ສະສົມ
## ໂດຍ ພຣະສົງແຂວງຫຼວງພະບາງ
## ລະຫວ່າງປີ 1890-2007

ການຈັດພິມຂອງໂຄງການປົກປັກຮັກສາຮູບພາບພຣະພຸດທະສາສະໜາ

ຈັດພິມໂດຍ

ANANTHA PUBLISHING
Luang Prabang New York

ການຈັດພິມຂອງ
ໂຄງການປົກປັກຮັກສາຮູບພາບພຣະພຸດທະສາສະໜາ
ຈັດພິມໂດຍ
**ອານັນທະການພິມ**

ໜັງສືຊຸດກ່ຽວກັບວັດທະນະທຳ,
ຮີດຄອງປະເພນີ ແລະປະຫວັດສາດຂອງຊາວພຸດລາວ
ກັບຮູບພາບທາງປະຫວັດສາດຈາກການສະສົມຂອງບັນດາວັດຕ່າງໆ
ໃນແຂວງຫຼວງພະບາງ

**ຮັນສ໌ ເກອອກ ເບີເກີ** ເປັນນັກຖ່າຍຮູບ ແລະນັກຂຽນຊາວເຢຍລະມັນ ເຮັດວຽກຮ່ວມກັບຄະນະສົງແຂວງຫຼວງພະບາງມາຕັ້ງແຕ່ປີ 1993 www.hansgeorgberger.de

**ຄຳວອນ ບຸນຍະພອນ** ເຄີຍໄດ້ບວດເປັນພຣະພິກຂຸ ຢູ່ວັດແສນສຸຂາຣາມ ໃນປີ 1996 ໂດຍມີ ສາທຸໃຫຍ່ຄຳຈັນທຣ໌ ວີຣະຈິຕຕະມະຫາເຖຣະ ເຈົ້າອະທິການວັດແສນ ສຸຂາຣາມ ເປັນພຣະອຸປັດຊາ. ຈົບປະລິນຍາຕຣີຈາກມະຫາວິທະຍາໄລ ມະຫາຈຸລາລົງກອນຣາຊວິທະຍາໄລ ແລະ ຈົບປະລິນຍາໂທຈາກມະຫາວິທະຍາໄລເກີກບາງກອກ ປະເທດໄທ.

ຕັ້ງແຕ່ປີ 2006, ທ່ານທັງສອງໄດ້ເຮັດວຽກຄົ້ນຄວ້າໃນໂຄງການປົກປັກຮັກສາຮູບພາບພຣະພຸດທະສາສະໜາ ແຂວງຫຼວງພະບາງ ແລະໄດ້ມີສ່ວນຮ່ວມກັບການສ້າງຕັ້ງຫໍພິພິດທະພັນພຸດທະສິນລະປະຂຶ້ນທີ່ວັດແສນ ສຸຂາຣາມ

ISBN 978-0-9844483-3-3
90000
9 780984 448333

# ຊັບສິນບັດຈາກໂຄງການປົກປັກຮັກສາຮູບພາບພຣະພຸດທະສາສະໜາ

ຫຼວງພະບາງ/ປະເທດລາວ

ຮັນສ໌ ເກອອກ ເບີເກີ
ຄຳວອນ ບຸນຍະພອນ

ຊັບສິນບັດຈາກໂຄງການປົກປັກຮັກສາຮູບພາບພຣະພຸດທະສາສະໜາ

ຫຼວງພະບາງ/ປະເທດລາວ

# ຮູບພາບປະຫວັດສາດທີ່ຖ່າຍ ຫຼື ສະສົມ
# ໂດຍ ພຣະສົງແຂວງຫຼວງພະບາງ
# ລະຫວ່າງປີ 1890-2007

ການຈັດພິມຂອງໂຄງການປົກປັກຮັກສາຮູບພາບພຣະພຸດທະສາສະໜາ

ຈັດພິມໂດຍ

ANANTHA PUBLISHING
Luang Prabang New York

ອຸປະຖຳໂດຍ
ພຣະເຖຣະ

**ສາທຸໃຫຍ່ອ່ອນແກ້ວ ສິດທິວົງ (ກິຕຕິພັທໂທ)**

ເຈົ້າອະທິການວັດປາກຄານ ແລະ ວັດຊຽງທອງ
ປະທານອົງການພຸດທະສາສະໜາສຳພັນເມືອງຫຼວງພະບາງ

**ໂຄງການປົກປັກຮັກສາຮູບພາບພຣະພຸດທະສາສະໜາ**
ຫຼວງພະບາງ/ປະເທດລາວ

ໂຄງການປົກປັກຮັກສາເອກະສານທີ່ຢູ່ໃນສະພາບຊຸດໂຊມ
**ຫໍສະໝຸດແຫ່ງຊາດອັງກິດ**
ໂຄງການຄົ້ນຄ້ວາທີ່ສຳຄັນ EAP 0177 ແລະ EAP 0326
ມອບທຶນໃຫ້ ຣັນສ໌ ເກອອກ ເບີເກີ
2006-2011


ໂດຍການຮ່ວມມືກັບ

**ຫໍສະໝຸດແຫ່ງຊາດລາວ**
ນະຄອນຫຼວງວຽງຈັນ
ສ ປ ປ ລາວ

ໂຄງການປົກປັກຮັກສາຮູບພາບພຣະພຸດທະສາສະໜາ
ສາລາທັມມະວິຫານ ວັດສຸວັນນະຄີຣີ
ຫຼວງພະບາງ, ສ ປ ປ ລາວ.

ອານັນທະການພິມ
ຫຼວງພະບາງ ນິວຢອກ
P.O.Box 790 ຫຼວງພະບາງ ສ ປ ປ ລາວ
www.ananthabooks.com
publisher@ananthabooks.com

# ສາລະບານ

ຄຳນຳ
ເອກະລັກແຫ່ງການສະສົມຮູບພາບພຣະພຸດທະສາສະໜາ ໜ້າ 13

ສາທຸໃຫຍ່ຄຳຈັນທຣ໌ ວິຣະຈິຕຕະມະຫາເຖຣະ
ພຣະສົງອົງສຳຄັນໃນການສະສົມຮູບພາບ
ວັດແສນ ສຸຂາຣາມ ໜ້າ 17

ສາທຸໃຫຍ່ຄຳຜົ້ນ ສີລະສັງວະຣະມະຫາເຖຣະ
ພຣະ ນັກສິລປະ
ວັດສຸວັນນະຄີຣີ ໜ້າ 21

ສົມເດັດພຣະສັງຄະຣາຊ ທັມມະຍານະມະຫາເຖຣະ
ພຣະສັງຄະຣາຊແຫ່ງປະເທດລາວ
ວັດໃໝ່ ສຸວັນນະພູມາຣາມ ໜ້າ 25

ສາທຸໃຫຍ່ມ້າວ ມະນີວົງໄສ
ວັດທີ່ມີຕົ້ນນິກຍູງເປັນສັນຍາລັກ
ວັດຊຽງທອງ ຣາຊະວໍຣະວິຫານ ໜ້າ 31

ການຝຶກອົບຮົມສະມາທິວິປັດສະນາ ໜ້າ 35

ຮູບພາບທີ່ຖ່າຍເປັນທາງການ 3 ແຜ່ນ ໜ້າ 41

ຮູບພາບທີ່ຖ່າຍລະຫວ່າງຊຸມປີ 1950 ແລະ 1960 ໜ້າ 49

ຮູບພາບພຣະສົງ ໜ້າ 55

ສາທຸໃຫຍ່ອຸ່ນເຮືອນ ທາສະປັນໂຍ
ພຣະ ນັກຖ່າຍຮູບ
ວັດໜອງ ສີຄູນເມືອງ ໜ້າ 65

CARTES DE VISITE ໜ້າ 71

ຮີດຄອງປະເພນີອັນເກົ່າແກ່ຂອງຊາວຫຼວງພະບາງ ໜ້າ 77

ມູມມອງຈາກຂ້າງໃນ ໜ້າ 83



ສາທຸໃຫຍ່ຄຳຈັນທຣ໌ ວິຣະຈິຕຕະມະຫາເຖຣະ ເຈົ້າອະທິການວັດແສນ ສຸຂາຣາມ
ຖ່າຍເມື່ອວັນທີ່ 7 ກຸມພາ (2) ປີ 2007

*ການຈັດພິມຄັ້ງນີ້ເພື່ອເປັນກຽດແລະເປັນທີ່ຣະລຶກແດ່*

*ພຣະມະຫາເຖຣະ*

*ສາທຸໃຫຍ່ຄຳຈັນທຣ໌ ວິຣະຈິຕຕະມະຫາເຖຣະ*

*ເຈົ້າອະທິການວັດແສນ ສຸຂາຣາມ ຫຼວງພະບາງ/ປະເທດລາວ*

*ພຣະສົງອົງສ້າງຕັ້ງໂຄງການປົກປັກຮັກສາຮູບພາບພຣະພຸດທະສາສະໜາ*

*ຂອງຄະນະສົງແຂວງຫຼວງພະບາງ.*

24 / VII

ຫ້າມຈຳໜ່າຍ

ການຈັດພິມຄັ້ງນີ້ເພື່ອເປັນກຽດແດ່ສາທຸໃຫຍ່ຄຳຈັນທຣ໌ ວິຣະຈິຕຕະມະຫາເຖຣະ ເຈົ້າອະທິການວັດແສນ ສຸຂາຣາມ ຜູ້ກໍ່ຕັ້ງໂຄງການອະນຸລັກແລະປົກປັກຮັກສາຮູບພາບຂອງພຣະສົງຫຼວງພະບາງ ໂຄງການຍັງໄດ້ຮິບໂຮມເອົາຮູບພາບຈາກວັດຕ່າງ ໆ ໃນຫຼວງພະບາງ ມີຫຼາຍກວ່າ 20,000 ຮູບເຊິ່ງເປັນປະຫວັດສາດກ່ຽວກັບພຣະພຸດທະສາສະໜາໃນລາວຖ່າຍໃນລະຫວ່າງປີ1890 ເຖິງ 2007. ເພື່ອທຳຕາມວັດຖຸປະສົງຂອງສາທຸໃຫຍ່ຄຳຈັນທຣ໌ ຈຶ່ງໄດ້ມີການອັດສຳເນົາຮູບພາບແລະເອກະສານເປັນດີຈິຕອລແລະຄົ້ນຄວ້າຫາຄວາມໝາຍຂອງຮູບເຊິ່ງໄດ້ດຳເນີນງານມາຕັ້ງແຕ່ປີ 2006. ໂຄງການຮັກສາເອກະສານສຳຄັນທີ່ຢູ່ໃນສະພາບຊຸດໂຊມຂອງຫໍສະໝຸດອັງກິດ (EAP) ໄດ້ໃຫ້ການສະໜັບສະໜຸນການຄົ້ນຄວ້ານີ້ໂດຍຜ່ານໂຄງການການຄົ້ນຄວ້າຮ່ວມມືກັບຫໍສະໝຸດແຫ່ງຊາດລາວ. ຈຸດປະສົງຂອງໂຄງການກໍ່ເພື່ອເຮັດໃຫ້ນັກຄົ້ນຄວ້າສາມາດເຂົ້າໄປຄົ້ນຄວ້າໂດຍຜ່ານຮູບພາບດີຈິຕອລເຫຼົ່ານີ້ເຊິ່ງຈະເກັບໄວ້ທີ່ຫຼວງພະບາງ ຫໍສະໝຸດແຫ່ງຊາດລາວນະຄອນຫຼວງວຽງຈັນແລະຫໍສະໝຸດແຫ່ງປະເທດອັງກິດ ນະຄອນຫຼວງລອນດອນ ເມື່ອສິ້ນສຸດການຄົ້ນຄວ້າ. ຮູບພາບທີ່ເປັນຕົ້ນສະບັບເຊິ່ງເປັນສົມບັດຂອງວັດແລະເປັນຂອງຄະນະສົງຈະເກັບຮັກສາໄວ້ທີ່ຫຼວງພະບາງ ສະຖານທີ່ເຮັດວຽກທີ່ຕັ້ງຂຶ້ນໂດຍຄະນະສົງ ເຊິ່ງເປັນສະຖານທີ່ທີ່ຄະນະສົງສະໄໝກ່ອນໃຊ້ເປັນທີ່ເຮັດວຽກແລະເປັນສະຖານທີ່ເກັບຮັກສາຮູບພາບ ການລວບລວມຂໍ້ມູນກ່ຽວກັບຮູບພາບແຕ່ລະຮູບກໍ່ເປັນສ່ວນສຳຄັນຂອງການເຮັດວຽກຂອງທີມງານ ການອະນຸລັກຮູບພາບຕົ້ນສະບັບ

ຂັ້ນພື້ນຖານກໍ່ຕ້ອງໄດ້ເຮັດ ແຕ່ຄວາມພະຍາຍາມໃນການອະນຸລັກແລະການເກັບຮັກສາແມ່ນຈຳເປັນສຳຫຼັບໃນອະນາຄົດອັນໃກ້ນີ້ ຄວາມຮ່ວມມືຂອງພຣະສົງແລະຊາວຫຼວງພະບາງແມ່ນມີຄວາມສຳຄັນທີ່ສຸດໃນການພິສູດຮູບພາບດ້ວຍຄວາມກະລຸນາແລະເປັນການໃຫ້ຄວາມຮູ້ ພວກເຮົາຂໍຂອບໃຈຢ່າງຈິງໃຈແດ່ທຸກທ່ານທີ່ໃຫ້ຄວາມຮ່ວມມືສຳຫຼັບການຊ່ວຍເຫຼືອເຮັດໃຫ້ໂຄງການມີຄວາມຄືບຖ້ວນສົມບູນ

ການຈັດພິມຄັ້ງນີ້ເປັນເທື່ອທຳອິດພາຍໃຕ້ການຄົ້ນຄວ້າຂັ້ນເລີ່ມຕົ້ນຂອງໂຄງການອະນຸລັກແລະປົກປັກຮັກສາຮູບພາບທາງພຣະພຸດທະສາສະໜາ ຈຸດມຸ່ງໝາຍຂອງພວກເຮົາກໍ່ເພື່ອເຮັດໃຫ້ຂໍ້ມູນທຸກຢ່າງສາມາດນຳມາໃຊ້ໄດ້ກັບເຍົາວະຊົນລາວຜູ້ທີ່ສົນໃຈປະຫວັດສາດຂອງປະເທດຕົນເອງແລະພຣະພຸດທະສາສະໜາໃນລາວ ເປັນຄວາມປາຖະໜາຂອງອະດີດສາທຸໃຫຍ່ຄຳຈັນທຣ໌ ແລະເປັນເຫດຜົນໃນການສະສົມຮູບພາບຂອງເພິ່ນ ແລະໄດ້ຕົກລົງກັບໂຄງການຂອງພວກເຮົາໃຫ້ອັດສຳເນົາເປັນຮູບດິຈິຕອລ ເຊິ່ງພວກເຮົາໄດ້ຮັບຄຳແນະນຳຈາກເພິ່ນໃນປີ 2005 ພວກເຮົາຂໍສະແດງຄວາມຮູ້ບຸນຄຸນຕໍ່ຫໍສະໝຸດແຫ່ງປະເທດອັງກິດທີ່ເຮັດໃຫ້ພວກເຮົາສາມາດເຮັດວຽກນີ້ໄດ້ໂດຍຜ່ານການຊ່ວຍເຫຼືອຂອງໂຄງການ EAP ແລະຂໍສະແດງຄວາມນັບຖືແດ່ຄະນະສົງຫຼວງພະບາງ, ຫໍສະໝຸດແຫ່ງຊາດລາວ, ກະຊວງຖະແຫຼງຂ່າວແລະວັດທະນາທຳ, ພະແນກຖະແຫຼງຂ່າວແລະວັດທະນາທຳ ແຂວງຫຼວງພະບາງ ຜູ້ທີ່ຍິນດີຕ້ອນຮັບແລະເປັນກຳລັງໃຈຕໍ່ວຽກງານຂອງພວກເຮົາ.

**ຂໍນ້ອມນະມັດສະການແດ່ພຣະມະຫາເຖຣະ, ເຈົ້າອະທິການວັດອີງ ທີ່ໄດ້ສະສົມຮູບພາບເຫຼົ່ານີ້ໄວ້**

ສາທຸໃຫຍ່ຄຳຈັນທຣ໌ ວິຣະຈິຕຕະມະຫາເຖຣະ ໄດ້ບວດເປັນພຣະພິກຂຸ ຫຼາຍກວ່າ 56 ປີ ໃນຖານະທີ່ເປັນເຈົ້າອະທິການວັດແສນສຸຂາຣາມ ເພິ່ນໄດ້ສະສົມຮູບພາບກ່ຽວກັບພຣະພຸດທະສາສະໜາ, ການເດີນທາງໄປນະມັດສະການພຸດທະສະຖານໃນທີ່ຕ່າງໆ, ປະຫວັດສາດລາວ, ຄອບຄົວຂອງເພິ່ນເອງ, ການຢ້ຽມຢາມຕ່າງປະເທດ ແລະເປັນຜູ້ກໍ່ຕັ້ງໂຄງການອະນຸລັກແລະປົກປັກຮັກສາຮູບພາບທາງພຣະພຸດທະສາສະໜາຂຶ້ນທີ່ຫຼວງພະບາງ. ເພິ່ນເປັນພຣະເຖຣະທີ່ພຸດທະສາສະນິກະຊົນ ທັງພາຍໃນແລະຕ່າງປະເທດ ໃຫ້ຄວາມເຄົາລົບນັບຖື, ເພິ່ນໄດ້ມໍລະນະພາບເມື່ອວັນທີ່ 9 ເດືອນກໍລະກົດ ປີ 2007. ເພິ່ນໄດ້ຝາກມໍລະດົກທີ່ມີຄຸນຄ່າທາງດ້ານຈິດໃຈໄວ້ໃຫ້ແກ່ຊາວຫຼວງພະບາງ ເຊັ່ນ ການສະສົມພຸດທະສິລະປະ, ຮູບພາບ, ປຶ້ມ ແລະເອກະສານຕ່າງໆ ເຊິ່ງໄດ້ເກັບຮັກສາໄວ້ໃນຫໍພິພິດທະພັນພຣະພຸດທະສາສະໜາທີ່ວັດແສນ ສຸຂາຣາມ.

ພຣະຫຼັກຄຳວິຣະວິສຸດທິຄຸນ
(ສາທຸໃຫຍ່ຄຳຈັນທຣ໌ ວິຣະຈິຕຕະມະຫາເຖຣະ, 1920-2007)
ເຈົ້າອະທິການວັດແສນ ສຸຂາຣາມ,

# ສາທຸໃຫຍ່ຄຳຈັນທຣ໌ ວິຣະຈິຕຕະມະຫາເຖຣະ

## ພຣະສົງອົງສຳຄັນໃນການສະສົມຮູບພາບ

### ວັດແສນ ສຸຂາຣາມ





ເພື່ອນຝູງພົບປະກັນທີ່ວັດທາດຂາວ ນະຄອນຫຼວງວຽງຈັນ ເດືອນ ເມສາ ປີ 1937. ແຖວນັ່ງ ຈາກຊ້າຍ: ສາທຸມະຫາຄຳພັນ ວິຣະຈິຕ ວັດສີພຸດທະບາດ, ສາທຸມະຫາຈັນສຸກ ບ້ານປາກຫ້ວຍ. ແຖວຢືນ ຈາກຊ້າຍ: ແກ້ວ ວິພາກອນ, ຄຳພັ່ນ ພານຸສິດ, ທອງຈັນ, ອ້ວນ ສຸກສະຫວັດ, ຜູຍ ພຸດທະສັກ, ແພງ ນໍລິນ, ສາມະເນນຄຳຈັນທຣ໌ ວິຣະຈິຕ, ເຈົ້າສຸກ ວົງສັກ, ອຸ່ນເຮືອນ, ທຸມແພງ ສຸກຂະເສີມ, ເດັກນ້ອຍ ຊາຍບໍ່ຊາບຊື່, ຄຳຕັ່ນ ສະເດັດຕັນ, ຄຳພັນ ນໍຣະສິງ ແລະ ຜູຍ ສູນທອນ.

ສາທຸຄຳຈັນທຣ໌ ວິຣະຈິຕໂຕ (1920-2007) ເຈົ້າອະທິການວັດແສນ ສຸຂາຣາມ ຖ່າຍເມື່ອອາຍຸ 40 ປີ ວັນທີ່ 9 ພຶດສະພາ (5) ປີ 1960 ທີ່ເມືອງໄຊງ່ອນ ປະເທດຫວຽດນາມ.



**ສາທຸໃຫຍ່ຄຳຟັ້ນ ເຈົ້າອະທິການວັດສຸວັນນະຄີລີ ພຣະສົງທີ່ເປັນນັກສິລະປະ**
ພາກສ່ວນສຳຄັນຢ່າງໜຶ່ງຂອງໂຄງການອະນຸລັກແລະປົກປັກຮັກສາຮູບພາບທາງພຣະພຸດທະສາສະໜາກໍ່ຄືຮູບພາບຂອງສາທຸໃຫຍ່ຄຳຟັ້ນ ສີລະສັງວະໂຣ ທີ່ເກັບຮັກສາໄວ້ຕັ້ງແຕ່ເພິ່ນໄດ້ມໍລະນະພາບໃນປີ 1987 ເຊິ່ງເກືອບທັງໝົດຍັງບໍ່ຖືກແຕະຕ້ອງກ່ອນທີ່ມງານຂອງໂຄງການຈະໄປຄົ້ນພົບໃນເດືອນກໍລະກົດ ປີ 2007. ມີທັງຮູບເປັນແຜ່ນແລະປຶ້ມຮູບຍັງຮັກສາໄວ້ຢູ່ໃນສະພາບດີ ແລະສະແດງໃຫ້ເຫັນເຖິງວິທີການຮັກສາຂອງພຣະສົງອົງໜຶ່ງທີ່ມັກແຕ້ມຮູບ,ອອກແບບການກໍ່ສ້າງວັດວາອາຮາມ ແລະຮູບຖ່າຍຂອງເພິ່ນເອງ. ຮູບຂອງເຈົ້າອະທິການວັດກຳລັງແຕ້ມຮູບນີ້ບາງທີອາດຈະຖ່າຍໃນຊຸມປີ 1940 ໂດຍນັກຄົ້ນຄ້ວາຊາວຝຣັ່ງໃນຊ່ວງໄລຍະເວລາທີ່ທຳການສຳຫຼວດຢູ່ປະເທດລາວ ຮູບແຜ່ນທີ່ 2 ຂອງຮູບແຜ່ນນີ້ໄດ້ຖືກເກັບຮັກສາໄວ້ໃນໂຄງການ École Française d'Extrême-Orient ທີ່ນະຄອນຫຼວງປາຣີ ປະເທດຝຣັ່ງເສດ.

ສາທຸຄຳຟັ້ນ ສີລະສັງວະໂຣ (1901-1987) ເຈົ້າອະທິການວັດຄີລີ ກຳລັງນັ່ງແຕ້ມຮູບສິ້ນຈ໋ ຢູ່ໜ້າສິມວັດຄີຣີ

# ສາທຸໃຫຍ່ຄໍາຝັ້ນ ສີລະສັງວະຣະມະຫາເຖຣະ

## ພຣະ ນັກສິລປະ

## ວັດສຸວັນນະຄີຣີ





ພຣະມະຫາເຖຣະແຫ່ງຫຼວງພະບາງ ຖ່າຍທີ່ວັດຊຽງທອງ ຣາຊະວໍຣະວິຫານ ໃນປີ 1936. ແຖວນັ່ງຈາກຊ້າຍ: ສາທຸໃຫຍ່ແກ່ນຈັນທນ໌ ກັຈຈາຍະນະມະຫາເຖຣະ (1892-1943) ເຈົ້າອະທິການວັດແສນ ສຸຂາຣາມ, ສົມເດັດພຣະສັງຄະຣາຊ ທັມມະຍານະ ມະຫາເຖຣະ (ບຸນທັນ) (1892-1984) ເຈົ້າອະທິການວັດລ້ອງຄູນ, ສາທຸຄຳຝັ້ນ ສີລະສັງວະໂຣ (1901-1987) ເຈົ້າອະທິການວັດຄີລີ ແລະສາທຸສົມຈິ່ນ. ແຖວຢືນ ຈາກຊ້າຍ: ສາທຸພູມີ, ສາທຸຈັນທີ, ສາທຸຈັນສຸກ ແລະສາທຸອ້ວນ ວິຣະສີ.

ສາທຸຄຳຝັ້ນ ສີລະສັງວະໂຣ (1901-1987)
ເຈົ້າອະທິການວັດຄີລີ ກຳລັງນັ່ງແຕ້ມຮູບສີນ້ຳ ຢູ່ໜ້າສິມວັດຄີຣີ



24 / VII
ຫ້າມຈຳໜ່າຍ

**ສົມເດັດພຣະສັງຄະຣາຊ ທັມມະຍານະມະຫາເຖຣະ**

ວັດໃໝ່ ສຸວັນນະພູມາຣາມ, ປະມຸກແຫ່ງຄະນະສົງລາວ, ຮູບພາບຕອນນີ້ເປັນຮູບຖ່າຍຢ່າງເປັນທາງການຂອງເພິ່ນເຊິ່ງໄດ້ຈັດພິມແຈກຢາຍໃຫ້ແກ່ທຸກໆ ວັດມາແລ້ວ. ຮູບນີ້ໄດ້ອັດສຳເນົາຈາກຮູບຖ່າຍລວມໝູ່ທີ່ຖ່າຍໃນຊຸມປີ 1930 ເຊິ່ງມີພຣະມະຫາເຖຣະນັ່ງເກົ້າອີ້ແລະເບິ່ງກ້ອງຖ່າຍ. ຮູບແຜ່ນທີ່ 2 ແມ່ນພິທີຕ້ອນຮັບພຣະມະຫາເຖຣະຈາກແຂວງຫຼວງພະບາງໃນວັນທີ່ 26 ເດືອນກຸມພາ ປີ 1953 ທີ່ສະໜາມບິນສາກົນວັດໄຕ ນະຄອນຫຼວງວຽງຈັນ. ເຊິ່ງເດີນທາງໂດຍເຄື່ອງບິນໄປນະຄອນຫຼວງວຽງຈັນເພື່ອເຂົ້າຮ່ວມກອງປະຊຸມປະຈຳປີຂອງອົງການຄະນະສົງລາວທົ່ວປະເທດ. ເຫັນນັກບິນເບິ່ງລົງມາຈາກປ່ອງຢ້ຽມ, ສະແດງວ່າເປັນຮູບພາບຖ່າຍທີ່ສຳຄັນທາງດ້ານປະຫວັດສາດ.

ສົມເດັດພຣະຍອດແກ້ວ ພຸດທະຊິໂນຣົສ ສະກົນມະຫາສັງຄະປາໂມກ ສົມເດັດພຣະ ສັງຄະຣາຊ ທັ້ມມະຍານະມະຫາເຖຣະ (ບຸນທັນ) (1892-1984) ວັດໃໝ່ ສຸວັນນະພູມາຣາມ

## ສົມເດັດພຣະສັງຄະຣາຊ ທັມມະຍານະມະຫາເຖຣະ
### ພຣະສັງຄະຣາຊແຫ່ງປະເທດລາວ
### ວັດໃໝ່ ສຸວັນນະພູມາຣາມ





ພິທີຕ້ອນຮັບ ສົມເດັດພຣະສັງຄະຣາຊ ທັມມະຍານະ ມະຫາເຖຣະ (ບຸນທັນ) ແລະຄະນະສົງ ຈາກຫຼວງພະບາງ ທີ່ສະໜາມບິນວັດໄຕ ໃນໂອກາດໄປເປີດກອງປະຊຸມຄະນະສົງທົ່ວປະເທດ ຈັດຂຶ້ນທີ່ວັດທາດຫຼວງເໜືອ ຄັ້ງວັນທີ່ 26 ກຸມພາ (2) ປີ 1953.

ສົມເດັດພຣະຍອດແກ້ວ ພຸດທະຊິໂນຣົສ ສະກົນມະຫາສັງຄະປາໂມກ ສົມເດັດພຣະສັງຄະຣາຊ ທັມມະຍານະມະຫາເຖຣະ (ບຸນທັນ) (1892-1984) ຖ່າຍທີ່ວັດຊຽງທອງ ຣາຊະວໍຣະວິຫານ ໃນປີ 1936.







ພຣະມະຫາເຖຣະແຫ່ງຫຼວງພະບາງຖ່າຍທີ່ໜ້າ ທໍທັດສະມາຣານ ໃນຄາວໄປທ່ຽວນະມັດສະການພຸດທະສະຖານໃນປະເທດອິນເດຍ ເມື່ອວັນທີ່ 1 ມັງກອນ ປີ ຄ.ສ.1957. ແຖວນັ່ງ ຈາກຊ້າຍ: ສົມເດັດພຣະສັງຄະຣາຊ ທັມມະຍານະມະຫາເຖຣະ ວັດໃໝ່, ສາທຸໃຫຍ່ຄໍາຝັ້ນ ສີລະສັງວະໂຣ ເຈົ້າອະທິການວັດຄີລີ. ແຖວຢືນ ຈາກຊ້າຍ: ສາທຸພັດທະມານ (ອຸ່ນ) ພັດທະຣະມຸນີ ວັດໃໝ່, ສາທຸຝັ້ນ ຕິສສະວັງໂສ ວັດໃໝ່, ສາທຸຄໍາຈັນທຣ໌ ວີຣະຈິຕໂຕ ເຈົ້າອະທິການວັດແສນ ສຸຂາຣາມ, ພຣະມະຫາສໍາຣານ ວັດອົງຕື້ ນະຄອນຫຼວງວຽງຈັນ ແລະພຣະມະຫາຈັນເຕົ້າ ຈັນທະວົງ ນັກສຶກສາລົງລາວ ໃນປະເທດອິນເດຍ ເປັນຜູ້ນໍາທ່ຽວ.

## ສາທຸໃຫຍ່ມ້າວແລະວັດຊຽງທອງ

ຮູບຂາວດຳທີ່ສວຍງາມຂອງສາທຸໃຫຍ່ມ້າວ ເຊິ່ງຖ່າຍຢູ່ໃນຫ້ອງສະຕູດີໂອ ບາງທີອາດຈະແມ່ນຖ່າຍໃນຊຸມປີ 1950. ຮູບແຜ່ນນີ້ທີມງານຂອງໂຄງການໄດ້ຄົ້ນພົບຢູ່ໃນກຸຕິຂອງເພິ່ນທີ່ວັດຊຽງທອງກັບຮູບອື່ນໆ ຈຳນວນ 488 ແຜ່ນ, ເຊິ່ງກ່ອນໜ້ານັ້ນມີຄົນບອກວ່າບໍ່ມີຮູບຫຼົງເຫຼືອຢູ່ເລີຍ ຫຼັງຈາກເຈົ້າອະທິການວັດໄດ້ມໍລະນະພາບໄປແລ້ວ ແລະສາທຸໃຫຍ່ມ້າວເພິ່ນກໍ່ບໍ່ສົນໃຈມັກຖ່າຍຮູບໃນຊ່ວງທີ່ເພິ່ນມີຊີວິດຢູ່.ຮູບຂອງວັດຊຽງທອງຈະເປັນຮູບກ່ຽວກັບການປະຕິສັງຂອນ, ສະຖາປະຕິຍະກຳ ແລະພິທີກຳທາງຄອບຄົວເປັນຕົວຢ່າງໜຶ່ງຂອງຄວາມແຕກຕ່າງກັບສິ່ງທີ່ມີຢູ່ໃນແຕ່ລະວັດເຊິ່ງມີຄວາມໜ້າສົນໃຈແລະຄວາມເປັນມາຂອງພຣະອົງທີ່ເພິ່ນສະສົມນັ້ນຕ່າງກັນ ຮູບແຜ່ນທີ່ 2 ຍັງບໍ່ຮູ້ວັນທີ່ແນ່ນອນເຊິ່ງບົ່ງບອກໃຫ້ຮູ້ຄວາມຈິງວ່າ ການຄົ້ນຄວ້າຈະຕ້ອງດຳເນີນຕໍ່ໄປກັບຮູບຂອງໂຄງການອີກຫຼາຍຮູບ.

ສາທຸໃຫຍ່ມ້າວ ມະນີວັງໂສ (1921-2001) ເຈົ້າອະທິການວັດຊຽງທອງ ຣາຊະວໍຣະວິຫານ

# ສາທຸໃຫຍ່ມ້າວ ມະນີວົງໂສ
## ວັດທີ່ມີຕົ້ນນິກາຍງູເປັນສັນຍາລັກ
## ວັດຊຽງທອງ ຣາຊະວໍຣະວິຫານ







ພຣະສົງສາມະເນນສ້ອມແປງຫຼັງຄາສິມວັດຊຽງທອງ ຣາຊະວໍຣະວິຫານ

ຫ້າມຈຳໜ່າຍ

ສາທຸມ້າວ ມະນີວັງໂສ (1921-2001) ເຈົ້າອະທິການວັດຊຽງທອງ ຣາຊະວໍຣະ
ວິຫານ ຖ່າຍໃນຊຸມ ປີ 1950 ທີ່ບາງກອກ ປະເທດໄທ

**ປະເພນີການອົບຮົມວິປັດສະນາກັມມະຖານຢູ່ຫຼວງພະບາງ**

ການເຝິກສະມາທິແມ່ນການເຝິກທາງດ້ານຈິດໃຈທີ່ຈຳເປັນສຳຫຼັບພຣະສົງສາມະເນນແລະຊາວພຸດທົ່ວໄປ ໂດຍການມີການອະທິບາຍຮູບພາບຂອງການປະຕິບັດວິປັດສະນາກັມມະຖານ ແລະການເດີນທຸດົງຢູ່ຫຼວງພະບາງເຊິ່ງປະຕິບັດກັນມາເປັນເວລາເກືອບ 100 ປີ ແຕ່ກ່ອນ ຝັ່ງຂວາຂອງແມ່ນ້ຳຂອງຈະເປັນສະຖານທີ່ສຳຫຼັບປະຕິບັດສະມາທິວິປັດສະນາ ຫຼັງຈາກໄດ້ມີການກໍ່ຕັ້ງສຳນັກວັດປ່າໂພນເພົາຂຶ້ນໃນຊຸມປີ 1970 ໂດຍສາທຸໃຫຍ່ຊາຍສະມຸດ (1927-1992), ວັດນີ້ຈຶ່ງກາຍເປັນສະຖານທີ່ອີກແຫ່ງໜຶ່ງສຳຫຼັບປະຕິບັດສະມາທິວິປັດສະນາຈົນມາເຖິງທຸກວັນນີ້. ສາທຸໃຫຍ່ຊາຍສະມຸດເປັນລູກສິດຂອງພຣະອາຈານມະຫາ ປານ ອານັນໂທ, ເຊິ່ງເປັນພຣະອາຈານໃຫຍ່ຝ່າຍວິປັດສະນາກັມມະຖານ ວັດໂສກປ່າຫຼວງ ນະຄອນຫຼວງວຽງຈັນ, ຜູ້ສົ່ງສາທຸໃຫຍ່ຊາຍສະມຸດໄປອົບຮົມວິປັດສະນາກັມມະຖານທີ່ບາງກອກ ປະເທດໄທ ແລະປະເທດພະມ້າໃນຊຸມປີ 1960.

# ການຝຶກອົບຮົມສະມາທິວິປັດສະນາ





ພຣະສົງສາມະເນນແລະອຸປາສົກຖ່າຍໃນຄາວໄປປະຕິບັດວິປັດສະນາ
ກັມມະຖານ ປ່າໜອງສະແກ້ວ ຝັ່ງຊຽງແມນ ກົງກັນຂ້າມກັບເມືອງຫຼວງພະບາງ
ປະມານປີ 1922

ພຣະສົງລາວທີ່ໄປເຝິກອົບຮົມວິປັດສະນາກັມມະຖານໃນບາງກອກປະເທດໄທ ຫຼັງຈາກນັ້ນກໍ່ໄປເຝິກອົບຮົມຕໍ່ໃນປະເທດພະມ້າ ປະມານປີ 1967 ສາທຸຊາຍ ສະມຸດ ໂຊຕິໂກ (ຂວາ) ໄດ້ນຳເອົາຄວາມຮູ້ກ່ຽວກັບການປະຕິບັດວິປັດສະນາ ກັມມະຖານຈາກການເຝິກອົບຮົມນັ້ນມາຕັ້ງສຳນັກຢູ່ວັດປ່າໂພນເພົາຫຼວງພະບາງ ໃນຊຸມປີ 1970.



**ຮູບພາບທີ່ຖ່າຍເປັນທາງການທັງ 3 ແຜ່ນ**

ຮູບແຜ່ນໃຫຍ່ນີ້ໄດ້ອັດຈາກຟີມແກ້ວ ມີຈຸດທີ່ເສຍຫາຍເລັກນ້ອຍ, ນີ້ເປັນຮູບທີ່ປະທັບໃຈຫຼາຍເພາະສະແດງໃຫ້ເຫັນຄວາມຫຼາກຫຼາຍຂອງຂະບວນການຖ່າຍຮູບທີ່ມີຢູ່ໃນໂຄງການ. ພຣະພິກຂຸໜຸ່ມ 4 ອົງຖ່າຍຮູບນຳກັນເໝືອນກັບວ່າພວກເພິ່ນນັ່ງຢູ່ໃນຫ້ອງຖ່າຍຮູບ.ຮູບນ້ອຍ 2 ແຜ່ນນັ້ນແມ່ນຖ່າຍຢູ່ໃນຫ້ອງຖ່າຍຮູບ: ຮູບຊ້າຍ, ສາມະເນນຄຳຝັ້ນນັ່ງຢູ່ໃນຫ້ອງຖ່າຍຮູບທີ່ບາງກອກ ປະເທດໄທ ສ່ວນຮູບຂວາ, ແມ່ນເດັກນ້ອຍຊາຍທີ່ນັ່ງຢ່າງສະຫງ່າງາມໃນຊຸດແບບຊາວເອີຣົບເພື່ອຖ່າຍຮູບຂອງເຂົາໃນຫ້ອງຖ່າຍຮູບທີ່ຈັດຂຶ້ນແບບກະທັນຫັນ ຫ້ອງຖ່າຍຮູບນີ້ຕັ້ງຢູ່ຫຼວງພະບາງ ຖ່າຍໃນຊຸມປີ 1920.

ຮູບພາບທີ່ຖ່າຍເປັນທາງການ 3 ແຜ່ນ

ພຣະສິງຈາກຫຼວງພະບາງ ຖ່າຍທີ່ວັດອູບມຸງ ນະຄອນຫຼວງວຽງຈັນ ປີ 1937.
ສາທຸມະຫາຄຳພັນ ວິຣະຈິຕ (ບັ່ງເຄິ່ງກາງ)



ສາມະເນນຄຳຝັ້ນ (ສາທຸໃຫຍ່ຄຳຝັ້ນ ສີລະສັງວະໂຣ) ຖ່າຍເມື່ອອາຍຸ 19 ປີ ສະໄໝທີ່ໄປສຶກສາ ພຣະປະຣິຍັດຕິທັມແລະວິຊາຊ່າງແຕ້ມ ຊ່າງປັ້ນ ແລະ ຊ່າງຄວັດ ພຳນັກທີ່ວັດໂພ ບາງກອກ ປະເທດໄທ ປີ 1919



ຄຳມຸງຄູນ ວິຣະຈິຕ (1909-1984) ອ້າຍສາທຸໃຫຍ່ຄຳຈັນທຣ໌ ວິຣະຈິຕໂຕ
ຖ່າຍເມື່ອອາຍຸ 13 ປີ ທີ່ ຫຼວງພະບາງ ປີ 1922



**ຮູບທີ່ສຳຄັນຖ່າຍໃນຊຸມປີ 1950 ແລະຊຸມປີ 1960**

ຮູບທີ່ໜ້າສົນໃຈສ່ວນຫຼາຍຈະຖ່າຍໃນຊ່ວງນີ້ ໂຄງການມີຮູບພາບທີ່ຖ່າຍດ້ວຍກ້ອງຖ່າຍຊະນິດຕ່າງໆແລະດ້ວຍເຕັກນິກການອັດລ້າງທີ່ແຕກຕ່າງກັນ. ຮູບທີ່ສວຍງາມທັງ 3 ແຜ່ນນີ້ ຖ່າຍຢູ່ນອກຕົວເມືອງຫຼວງພະບາງ, ເປັນການໄປທັດສະນາຈອນແລະໃນໂອກາດເຮັດບຸນພິທີກຳສຳຄັນ ຍັງບໍ່ໄດ້ລະບຸຊື່ຜູ້ຖ່າຍ ເຊິ່ງເປັນວຽກຂອງໂຄງການຄົ້ນຄວ້າ ເບິ່ງຄືວ່າຈະແມ່ນພຣະສົງຖ່າຍກັນເອງ.

# ຮູບພາບທີ່ຖ່າຍລະຫວ່າງຊຸມປີ 1950 ແລະ 1960



ຂະບວນແຫ່ນາກໄປສູ່ພິທີອຸປະສົມບົດທີ່ວັດຈອມເຂົາມະນີລັດ  ເມືອງຫ້ວຍຊາຍ
ແຂວງບໍ່ແກ້ວ ປີ 1957



ພຣະສົງຈາກຫຼວງພະບາງ ນັ່ງເຮືອໄປທ່ຽວຊົມເມືອງປາກອູ ກ່ອນປີ 1975



ພຣະສົງຈາກຫຼວງພະບາງ ນັ່ງເຮືອໄປທ່ຽວຊົມຖ້ຳຕິ່ງ ເມືອງປາກອູ ໃນເທດ
ສະການບຸນປີໃໝ່ລາວ ກ່ອນປີ 1975

**ພຣະມະຫາເຖຣະອົງສຳຄັນຂອງຫຼວງພະບາງ**

ໃນໄລຍະເວລາຕັ້ງແຕ່ປີ 1892 ເຖິງ ປີ 2007, ຮູບເຫຼົ່ານີ້ມີຄວາມສຳຄັນສຳຫຼັບຄະນະສົງເພື່ອນຳໄປເປັນແບບຢ່າງໃນຊ່ວງໄລຍະເວລາທີ່ມີການປ່ຽນແປງຂອງສະຕະວັດທີ່ 20. ຮູບທີ່ຖ່າຍຢ່າງເປັນທາງການເຫຼົ່ານີ້ແມ່ນມີຄວາມໝາຍເປັນຕົວແທນພຣະມະຫາເຖຣະທີ່ໜ້າເຄົາລົບ ນັບຖື ທັງເປັນເຈົ້າອະທິການວັດ ເຊິ່ງໄດ້ມອບໃຫ້ແຂກຜູ້ສຳຄັນທີ່ມາຢ້ຽມຢາມ ແລະຍັງໄດ້ສົ່ງໄປໃຫ້ວັດຕ່າງໆທີ່ຢູ່ຕ່າງປະເທດອີກດ້ວຍ. ສຳຫຼັບປະຊາຊົນລາວແລ້ວ ຮູບພາບເຫຼົ່ານີ້ເປັນສ່ວນໜຶ່ງແຫ່ງຄວາມສັກສິດແລະຄວາມໝັ້ນຄົງທາງດ້ານຈິດໃຈເຊິ່ງເປັນຄວາມເຊື່ອທີ່ມີຕໍ່ ພຣະສົງແລະມີຄວາມໝາຍຫຼາຍກວ່າເປັນຂອງທີ່ຣະລຶກຫຼືເປັນເອກະສານທາງດ້ານປະຫວັດສາດ. ພຣະມະຫາເຖຣະແຕ່ລະອົງ ເພິ່ນໄດ້ມອບຄຳສອນທີ່ສືບທອດກັນມາໃຫ້ແກ່ລູກສິດແລະເປັນຕົວຢ່າງໃນການດຳລົງຊີວິດແບບຊາວພຸດໃຫ້ແກ່ປະເທດຊາດແລະປະຊາຊົນ ຮູບຂອງເພິ່ນເປັນສິ່ງເຕືອນໃຈທີ່ແຈ່ມແຈ້ງກ່ຽວກັບທີນທາງແຫ່ງຈິດວິນຍານຂອງເພິ່ນ.

24 / VII

ຫ້າມຈຳໜ່າຍ

## ຮູບພາບພຣະສິງ



ສາທຸໃຫຍ່ແກ່ນຈັນທນ໌ ກັຈຈາຍະນະມະຫາເຖຣະ (1892-
1941) ເຈົ້າອະທິການວັດແສນ ສຸຂາຣາມ



ສາທຸໃຫຍ່ອຸ່ນເຮືອນ ທາສະປັນໂຍ (1928-1982) ວັດໜອງ
ສີຄູນເມືອງ



ສາທຸໃຫຍ່ພູມີ ພະລັປປັຕໂຕ (1920-1996) ເຈົ້າອະທິການ
ວັດໜອງ ສີ້ຄູນເມືອງ



ສາທຸໃຫຍ່ຊາຍສະມຸດ ໂຊຕິໂກ (1927-1992) ເຈົ້າອະທິການ
ວັດປ່າໂພນເພົາ



ສາທຸໃຫຍ່ອ່ອນຕາ ສັນຕະປັນໂຍ (1923-2003)
ເຈົ້າອະທິການວັດມະໂນຣົມ

ສາທຸໃຫຍ່ບຸນຈັນ ໂພທິຈິຕໂຕ (1920-1996)
ເຈົ້າອະທິການວັດຊຽງມ່ວນ ວະຊິຣະມັງ ຄະລາຣາມ







ສາທຸໃຫຍ່ຄຳດີ ດິສະປັນໂຍ (1889-1951) ເຈົ້າອະທິການ
ວັດໜອງ ສີຄູນເມືອງ

ສາທຸໃຫຍ່ຄຳພັນ ພັທທະທັມໂມ (1922-2006) ເຈົ້າອະທິການ
ວັດໂຄມຂວາງ

**ພຣະນັກຖ່າຍຮູບ**

ສາທຸໃຫຍ່ອຸ່ນເຮືອນ ເປັນພຣະພິກຂຸຢູ່ວັດໜອງ ເພິ່ນເປັນນັກຖ່າຍຮູບທີ່ມີຄວາມຊຳນານທາງດ້ານເຕັກນິກພິເສດແລະມີພົບໄຫວໃນການຖ່າຍຮູບພິທີກຳທາງສາສນາ, ຊີວິດການເປັນຢູ່ແລະການເດີນທາງຂອງພຣະສົງຫຼວງພະບາງ. ຮູບຂອງເພິ່ນຈຳນວນຫຼວງຫຼາຍກໍ່ໄດ້ເປັນພາກສ່ວນໜຶ່ງຂອງໂຄງການໜ້ານີ້ມີຮູບສອງຮູບ ເຊິ່ງສະແດງເຖິງລັກສະນະພິເສດໃນການຖ່າຍຮູບຂອງເພິ່ນ: ຮູບທີໜຶ່ງ ການປະດັບດອກໄມ້ໄຟ ແລະຈູດບັ້ງໄຟດອກເພື່ອສະເຫຼີມສະຫຼອງໃນເທດສະການບຸນອອກພັນສາຢູ່ວັດຂອງເພິ່ນ ແລະ ຮູບທີ່ 2 ກ່ຽວກັບການປະຕິບັດສະມາທິວິປັດສະນາຂອງພໍ່ຂາວແມ່ຂາວບ້ານວັດໜອງເຊິ່ງນຳພາໂດຍສາທຸໃຫຍ່ຄຳດີ ເຈົ້າອະທິການວັດໜອງ ໃນຊຸມປີ 1950.

24 / VII
ຫ້າມຈຳໜ່າຍ

# ວັດໜອງ ສີຄູນເມືອງ





ຈູດບັ້ງໄຟດອກ ແລະການປະດັບປະດາດອກໄມ້ໄຟ ມື້ບຸນອອກພັນສາທີ່ວັດໜອງ ສີຖູນເມືອງ ໃນຊຸມປີ 1960 ຖ່າຍຮູບໂດຍ : ສາທຸໃຫຍ່ອຸ່ນເຮືອນ ທາສະປັນໂຍ



ພໍ່ຂາວແລະແມ່ຂາວ ຈາກວັດໜອງ ສີຖູນເມືອງ ໄປປະຕິບັດວິປັດສະນາກັມມະຖານໃນເຂດປ່າວັດລ້ອງຄູນຝັ່ງຊຽງແມນ ໃນຊຸມປີ 1950 ຖ່າຍຮູບໂດຍ: ສາທຸໃຫຍ່ອຸ່ນເຮືອນ ທາສະປັນໂຍ



**"Cartes-de-visite" ຮູບພາບຂອງພຣະພິກຂຸແລະສາມະເນນ**

ຮູບສ່ວນຫຼາຍຖ່າຍໃນຊຸມປີ 1930 ຮູບເຫຼົ່ານີ້ເປັນການແລກປ່ຽນກັນລະຫວ່າງພຣະພິກຂຸໜຸ່ມແລະສາມະເນນທີ່ໄດ້ພົບກັນໃນໄລຍະເວລາສຶກສາຢູ່ໃນສະຖາບັນການສຶກສາທາງພຣະພຸດທະສາສະໜາໃນປະເທດກຳປູເຈຍ, ໄທ ຫຼື ສະຫະພາບມຽນມາ ເວລາຈາກກັນເພື່ອກັບຄືນປະເທດຂອງໃຜລາວ ຮູບເຫຼົ່ານີ້ຈຶ່ງເປັນສິ່ງທີ່ອະທິບາຍເຖິງຄວາມຄິດຮອດຄິດເຖິງກັນ ບາງຄົນກໍ່ຂຽນເປັນພາສາຝັ່ງເສດເພື່ອຣະລຶກເຖິງສິ່ງທີ່ໄດ້ຮຽນນຳກັນໃນໂຮງຮຽນປາລີກຸງພະນົມເປນຫຼືສະຖາບັນແບບດຽວກັນໃນບາງກອກ ແລະມັນດາເລ. ການສະສົມຮູບ "cartes-de-visite" ຂອງພຣະພິກຂຸສາມະເນນຂອງພວກເຮົາເພື່ອສະແດງໃຫ້ເຫັນການແລກປ່ຽນຄວາມຮູ້ສຶກລະຫວ່າງສະມາຊິກຂອງພຣະສົງໃນສີ່ປະເທດເອເຊຍຕະເວັນອອກສ່ຽງໃຕ້ທີ່ນັບຖືພຣະພຸດທະສາສະໜານິກາຍເຖຣະວາດ. ຮູບຂອງພຣະສົງຊາວກຳປູເຈຍທີ່ເກັບຮັກສາຢູ່ໃນຫຼວງພະບາງ ປະຈຸບັນນີ້ກໍ່ເປັນສ່ວນສຳຄັນໜຶ່ງຂອງມໍລະດົກທາງພຣະພຸດທະສາສະໜາຂອງກຳປູເຈຍທີ່ໄດ້ສູນຫາຍໄປຢ່າງໜ້າເສຍດາຍ.

# « CARTES DE VISITE »




ພຣະສີສະຫວັດນັກສຶກສາສົງລາວໃນບາງກອກ ສົ່ງມາໃຫ້ ສາມະເນນສຸວັນ ທີ່ວັດແສນ ເພື່ອເປັນທີ່ຣະລຶກ ໃນປີ 1936



ສາມະເນນໝັ້ນ ນັກສຶກສາສົງລາວ ໃນບາງກອກສົ່ງມາໃຫ້ ສາມະເນນສຸວັນ ທີ່ວັດແສນ ເພື່ອເປັນທີ່ຣະລຶກ ໃນປີ 1936



ພຣະອິນຄຳ (ພຣະໄທ) ສົ່ງມາໃຫ້ ສາມະເນນສຸວັນ ທີ່ວັດແສນ ເພື່ອເປັນທີ່ຣະລຶກ ໃນປີ 1936




ພຣະຈິບ (ພຣະຂະເໝນ) ສົ່ງໃຫ້ສາທຸ ມະຫາຄຳພັນ ເພື່ອເປັນທີ່ຣະລຶກ ວັນທີ່ ໃນປີ 1933



ພຣະມະຫາກຸ ສຸວັນນະເມທີນັກສຶກສາ
ສົງລາວ ໃນກຳປູເຈຍ ສົ່ງໃຫ້ສາທຸ
ມະຫາຄຳພັນເພື່ອເປັນທີ່ຣະລຶກ
ໃນປີ 1937



ພຣະມະຫາພູມີ ນັກສຶກສາສົງລາວ
ໃນປະເທດໄທ ສົ່ງມາໃຫ້ ສາມະເນນ
ຄຳຈັນທຣ໌ ເພື່ອເປັນທີ່ຣະລຶກ ໃນປີ
1936



ພຣະມະຫາສະໄຫວ
ສະໄຫວແສນ ຍາກອນ (ພຣະໄທ)
ສົ່ງມາໃຫ້ສາມະເນນ ຄຳຈັນທຣ໌
ເພື່ອເປັນທີ່ຣະລຶກ ໃນປີ 1936



ພຣະມະຫາພູມາ ວັດມະຫາທາດ
ບາງກອກ ປະເທດໄທ
ສົ່ງມາໃຫ້000ສາທຸ ຄຳຈັນທຣ໌
ເພື່ອເປັນທີ່ຣະລຶກ ໃນປີ 1959



ສາມະເນນຈັນເພັງ ຈັນເທຣີ
ວັດແສນ ສຸຂາຣາມ ຖ່າຍໃນປີ 1953



ພຣະມະຫາຊອງ ຊິມຈັນທອນ(ພຣະໄທ)
ສົ່ງມາໃຫ້ສາທຸຄໍາຈັນທຣ໌
ເພື່ອເປັນທີ່ຣະລຶກ ໃນປີ 1951

24 / VII



ພຣະທັດ (ພຣະຂະເໝນ)
ສົ່ງໃຫ້ສາທຸມະຫາຄໍາພັນ
ເພື່ອເປັນ ທີ່ຣະລຶກ ໃນປີ 1933



ພຣະມະຫາຊະນະ (ພຣະໄທ)
ສົ່ງມາໃຫ້ສາມະເນນຄໍາຈັນທຣ໌ ວິຣະຈິຕ
ເພື່ອເປັນທີ່ຣະລຶກ ໃນປີ 1937




ພຣະຂຽວ (ພຣະຂະເໝນ) ສົ່ງໃຫ້ ສາທຸມະຫາຄຳພັນ ເພື່ອເປັນທີ່ຣະລຶກ ວັນທີ່ 18 ຕຸລາ (10) ປີ 1933



ພຣະສາມ (ພຣະຂະເໝນ) ສົ່ງໃຫ້ ສາທຸມະຫາຄຳພັນ ເພື່ອເປັນທີ່ຣະລຶກ ວັນທີ່ 6 ກຸມພາ (2) ປີ 1933



ພຣະບຸນ (ພຣະຂະເໝນ) ສົ່ງໃຫ້ ສາທຸມະຫາຄຳພັນ ເພື່ອເປັນທີ່ຣະລຶກ ໃນປີ 1933



ພຣະທອງດີ ຈາກວັດແສນ ໃນຂະນະທີ່ ໄປສຶກສາຢູ່ວັດແກ້ວຟ້າລ່າງ ບາງກອກ ປະເທດໄທ ປີ 1928

**ຄວາມສວຍງາມຂອງພິທີກຳອັນເກົ່າແກ່ຂອງຊາວຫຼວງພະບາງ**

ຊາວພຸດທີ່ເອົາເຂົ້າໃສ່ບາດໃຫ້ພຣະສົງໃນຕອນເຊົ້າ ເປັນການກະທຳທີ່ສະຫງ່າງາມແລະໃຫ້ກຽດ ເປັນການສະແດງຄວາມເຄົາຣົບນັບຖືຕໍ່ພຣະສົງ ແລະເພື່ອຢາກໄດ້ບຸນເຊິ່ງອາດຈະປ່ຽນແປງຊີວິດຂອງຕົນເອງ ແລະຄອບຄົວໃຫ້ຈະເລີນກ້າວໜ້າ. ການຕ້ອນຮັບພຣະສົງຈາກຫຼວງພະບາງ ດ້ວຍຄວາມເຄົາລົບຍິ່ງໃນໝູ່ບ້ານ ແຫ່ງໜຶ່ງກໍ່ ເປັນວິທີການທຳບຸນອີກແບບໜຶ່ງ. ຮູບທີ່ເກົ່າແກ່ຈາກໂຄງການທັງສອງຮູບນີ້ສະແດງໃຫ້ເຫັນເຖິງເຫດການທີ່ເກີດຂຶ້ນໃນສະໄໝກ່ອນ.

# ຮີດຄອງປະເພນີອັນເກົ່າແກ່ຂອງຊາວຫຼວງພະບາງ





ຊາວບ້ານໃນເຂດພາກເໜືອຂອງລາວ ກຳລັງຕ້ອນຮັບພຣະສົງຈາກຫຼວງພະບາງ
ດ້ວຍຄວາມເຄົາຣົບຢ່າງຍິ່ງ ຮູບນີ້ ຖ່າຍໃນປີ 1962





ພຣະສົງໄປບິນດະບາດໃນມື້ເຮັດບຸນຫໍ່ເຂົ້າປະດັບດິນ ທີ່ຫຼວງພະບາງ ຮູບທີ່ເຫັນ
ຖ່າຍໜ້າສາລາທັມມະວິຫານ ວັດຄີລີ ປີ 1959

## ມຸມມອງຈາກຂ້າງໃນ

ຮູບພາບເປັນຈຳນວນຫຼວງຫຼາຍຂອງໂຄງການອະນຸລັກແລະປົກປັກຮັກສາຮູບພາບທາງພຣະພຸດທະສາສະໜາທີ່ຖ່າຍໂດຍຄົນລາວທັງທີ່ເປັນພຣະພິກຂຸສົງແລະຄະຣືຫັດ (ຊາວບ້ານ) ເພື່ອບັນທຶກໂລກພິທີກຳຕ່າງໆ ຂອງຕົນເອງແລະຄົນອື່ນ ແບບການປະເມີນຜົນມຸມມອງຈາກຂ້າງໃນສະແດງໃຫ້ເຫັນເຖິງຄວາມເປັນມາຂອງສັງຄົມລາວ ຄະນະສົງ ແລະຊຸມຊົນໃນຊົນນະບົດຂອງຫຼວງພະບາງ ຈຶ່ງຮູ້ໄດ້ວ່າຂ້າງນອກບໍ່ສາມາດມີໄດ້ສຳຫຼັບປະຫວັດຄວາມເປັນມາຂອງຮູບພາບນັ້ນສາມາດມອງໄດ້ຈາກຂ້າງໃນວ່າມັນເປັນຂອງສະສົມທີ່ມີຄຸນຄ່າຍິ່ງຂອງຫຼວງພະບາງ ມັນເປັນຫຼັກຖານການລວມສູນທາງດ້ານວັດທະນະທຳແລະສັງຄົມທີ່ພາກພູມໃຈໃນຄວາມສຳເລັດແລະຄວາມພິຖີພິຖັນແລະເປັນການເສາະຫາສິ່ງຍຶດໜ່ຽວທາງດ້ານຈິດໃຈແລະວິນຍານຂອງຕົວເມືອງອັນເປັນທີ່ຮັກຂອງພວກເຂົາເປັນເວລາຫຼາຍກວ່າ 120 ປີ.

# ມູມມອງຈາກຂ້າງໃນ



24 / VII

ຫ້າມຈຳໜ່າຍ

ຂະບວນແຫ່ສິບເພັຍ ພານິດຜິນ ບ້ານຊ່າງຫວີ (ບ້ານຊຽງມ່ວນ) ປີ 1953
ຮູບຖ່າຍໂດຍ ຄຳຜູຍ ບຸບຜາ



ທີ່ຣະລຶກໃນພິທີຂອດສິມຝັງລູກນິມິດວັດວິຊຸນນະຣາຊຂອງຄະນະສົງ
ຫຼວງພະບາງ ປີ 1950  ຮູບຖ່າຍໂດຍ ຄຳພູຍ ບຸບຜາ



ຈັດພິມຄັ້ງທຳອິດໃນຮູບແບບປຶ້ມໂດຍ

**ອານັນທະການພິມ**

ຫຼວງພະບາງ ນິວຢອກ

ເດືອນມີນາ 2010

ISBN : 978-0-9844483-3-3

ບັນນາທິການພາສາອັງກິດ: ທ່ານບຣາຍອັນ ລິງແຮມ

ສະຫງວນລິຂະສິດໂດຍ

**ໂຄງການປົກປັກຮັກສາຮູບພາບພຣະພຸດທະສາສະໜາ**

ແຂວງຫຼວງພະບາງ ປະເທດລາວ

ກັບນັກປະພັນ ແລະ

**ອານັນທະການພິມ**

ສະຫງວນລິຂະສິດ. ຫ້າມບໍ່ໃຫ້ອັດສຳເນົາຄືນໃໝ່ ຫຼື ຖ່າຍທອດຄືນໃໝ່ບໍ່ວ່າໃນຮູບແບບໃດ ຫຼື ວິທີໃດກໍ່ຕາມ ບໍ່ວ່າຈະເປັນທາງດ້ານເຄື່ອງເອເລັກໂຕນິກ, ເຄື່ອງກົນຈັກ, ເຄື່ອງອັດເອກະສານ, ການຈົດບັນທຶກ ຫຼື ຢ່າງໃດຢ່າງໜຶ່ງໂດຍບໍ່ໄດ້ຮັບອານຸຍາດຈາກ

ໂຄງການປົກປັກຮັກສາຮູບພາບພຣະພຸດທະສາສະໜາ

ແຂວງຫຼວງພະບາງ

ການຄົ້ນຄວ້າຂອງໂຄງການປົກປັກຮັກສາຮູບພາບພຣະພຸດທະສາສະໜາ

ໄດ້ດຳເນີນງານມາຕັ້ງແຕ່ປີ 2006 ໂດຍ

**ຫໍສະໝຸດແຫ່ງຊາດອັງກິດ**

ໂຄງການປົກປັກຮັກສາເອກະສານທີ່ຢູ່ໃນສະພາບຊຸດໂຊມ

ໂດຍການໃຫ້ທຶນຈາກ

**ອົງການ ARCADIA**

ພິມທີ່ ໂຮງພິມເດືອນຕຸລາ ໃນບາງກອກ

ຣາຊະອານາຈັກໄທ

ເດືອນມີນາ 2010

ຜູ້ຊ່ຽວຊານດ້ານການອານຸລັກ: ມາຕິນ ເຈີຍິນ

ອອກແບບພິມໂດຍ: ຄຸນອັດຊະຣະວະດີ ສຸດປຣະເສີດ

www.ananthabooks.com

www.bl.uk/about/policies/endangeredarch/homepage.htlm





First published in this form by

ANANTHA PUBLISHING
Luang Prabang New York
March 2010

ISBN : 978-0-9844483-3-3

English language editor: Brian Lingham

Copyright by
**THE BUDDHIST ARCHIVE OF PHOTOGRAPHY**
Luang Prabang, Laos
with the authors and
ANANTHA PUBLISHING

All rights reserved. No part of this publication may be reproduced, stored in a retrieval system, or transmitted in any form or by any means, electronic, mechanical, photocopying, recording or otherwise, without the prior permission in writing by THE BUDDHIST ARCHIVE OF PHOTOGRAPHY Luang Prabang.

Research at THE BUDDHIST ARCHIVE OF PHOTOGRAPHY is sustained since the year 2006 by

THE BRITISH LIBRARY
Endangered Archives Programme
funded by
ARCADIA

Printed and bound by OCTOBER PRINTING in Bangkok,
Kingdom of Thailand,
March 2010

Conservation expert: Martin Juergens
Graphic design: Autcharavadee Sudprasert

www.ananthabooks.com
www.bl.uk/about/policies/endangeredarch/homepage.htlm





Photograph commemorating the assembly of the Sangha of Luang Prabang for the historic Khaut-Sim-Ceremony at Vat Visounnaraj in 1950. Photograph by Khamphoui Boupha

Silver gelatine DOP print, 11.4 x 16.2 cm, Collection of Vat Khili, Archive Nr C1771R/Box C11



Funeral procession for Phaya Phanitphonh at Ban Sangwee (Ban Xiengmuan) in 1953.

Silver gelatine DOP print, 14.0 x 9.0 cm, Collection of Vat Khili, Archive Nr C1470R/Box C10

# A VIEW FROM INSIDE

**A view from inside**

A large number of the photographs of the Buddhist Archive of Photography have been taken by Lao people who documented their world, their ceremonies or each other. Their assessment forms a view from inside that shows Lao society, the Buddhist Sangha and the urban community of Luang Prabang with a knowledge that no outsider could have had. For the history of photography, it is this view from inside that makes the collection of the Luang Prabang archive so very precious. It is a rare, concentrated testimony to a society that, proud of its achievements and its particularity, sought to capture the heart and soul of its civilization for over 120 years. This happened in a remote location of pristine beauty ruled by a Royal court that had access to the newest photographic instruments of its time.



The monk's morning round of alms on Bun Khao Padapdin. Luang Prabang, in front of Sala Thammaviharn and Vat Khili, 1959

Silver gelatine DOP print, 14.0 x 8.8 cm, Collection of Vat Khili, Archive Nr C1746R/Box C11





A village community respectfully receives monks from Luang Prabang. Northern provinces of Laos, 1962

Silver gelatine DOP print, 24.1 x 18.3 cm, Collection of Vat Khili, Archive Nr C1813R/Box C14



# ANCIENT CEREMONIES OF LUANG PRABANG

## The beauty of ancient ceremonies of the people of Luang Prabang

For the laypeople, giving rice to the monks during the morning round of alms is a dignified and privileged way to show respect for the members of the Sangha and to acquire merit that may change their karma or the karma of their relatives. Receiving senior monks of Luang Prabang with respect and worship in a village is another very auspicious occasion of making merit. Two ancient photographs from the archive show how accurately such moments were organized in the old times.



Phra Kheao (Khmer monk). Photograph sent to Phra Maha Khamphan for souvenir on 18th October, 1933

Silver gelatine DOP print, 6.3 x 8.5 cm, Collection of Vat Saen, Archive Nr A0025R/Box A2



Phra Sam (Khmer monk). Photograph sent to Phra Maha Khamphan for souvenir on 6th February, 1933

Silver gelatine DOP print, 6.3 x 8.7 cm, Collection of Vat Saen, Archive Nr A0159R/Box A2



Phra Boun (Khmer monk). Photograph sent to Phra Maha Khamphan for souvenir in 1933

Silver gelatine DOP print, 5.9 x 8.9 cm, Collection of Vat Saen, Archive Nr A0051R/Box A1



Phra Thongdee (from Vat Saen). during his studies at Vat Keo Fah Lang, Bangkok, 1928

Silver gelatine DOP print, 8.2 x 13.3 cm, Collection of Vat Saen, Archive Nr A0167R/Box A2



Novice Chanpheng Chanthery from Vat Saen Sukharam, in 1953

Silver gelatine DOP print, 5.4 x 7.8 cm, Collection of Vat Saen, Archive Nr A0157R/ Box A2



Phra Mahasong Somchanthorn, a Thai monk, sent to Phra Khamchan Virachitto for souvenir, in 1951

Silver gelatine DOP print, 8.6 x 13.6 cm, Collection of Vat Saen, Archive Nr A0154R/Box A2




Phra Touch (Khmer monk), sent to Phra Maha Khamphan for souvenir in 1933

Silver gelatine DOP print, 6.2 x 8.5 cm, Collection of Vat Saen, Archive Nr A0162R/Box A2



Phra Maha Chana, a Thai monk, sent to Novice Khamchan Virachit for souvenir in 1937.

Silver gelatine DOP print, 6.1 x 8.6 cm, Collection of Vat Saen, Archive Nr A0156R/Box A2



Phra Maha Ku Suvannamethy, a Lao student monk in Cambodia, sent to Phra Maha Khamphan for souvenir in 1937

Silver gelatine DOP print, 5.9 x 8.5 cm, Collection of Vat Saen, Archive Nr A0052R/Box A1



Phra Maha Phoumy, a Lao student monk in Thailand, sent to Novice Khamchan for souvenir in 1936

Silver gelatine DOP print, 5.8 x 8.9 cm, Collection of Vat Saen, Archive Nr. A0056R/Box A1



Phra Maha Sawai Sawaisaenyakorn, a Thai monk, sent to Novice Khamchan for souvenir in 1936

Silver gelatine DOP print, 8.6 x 14.3 cm, Collection of Vat Saen, Archive Nr A0055R/Box A1



Phra Maha Phouma, a monk from Vat Mahathat, Bangkok, sent to Sathou Khamchan for souvenir in 1959

Silver gelatine DOP print, 6.6 x 8.5 cm, Collection of Vat Saen, Archive Nr A0053R/Box A1




Phra Sisavat, a Lao student monk in Bangkok, sent to Novice Suvan at Vat Saen for souvenir in 1936

Silver gelatine DOP print, 7.2 x 10.7 cm, Collection of Vat Saen, Archive Nr A0045R/Box A1



Novice Manh, a Lao student monk in Bangkok, sent to Novice Suvan at Vat Saen for souvenir in 1936

Silver gelatine DOP print, 7.4 x 11.0 cm, Collection of Vat Saen, Archive Nr A0047R/Box A1



Phra Inkham, a Thai monk, sent to Novice Suvan at Vat Saen for souvenir in 1936

Silver gelatine DOP print, 7.4 x 11.0 cm, Collection of Vat Saen, Archive Nr A0046R/Box A1




Phra Chip (Khmer monk). Photograph sent to Phra Maha Khamphan for souvenir in 1933

Silver gelatine DOP print, 6.1 x 8.5 cm, Collection of Vat Saen, Archive Nr A0158R/Box A2

# « CARTES DE VISITE »

**"Cartes-de-visite" photographs of young monks and novices**

